ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຄູ່ມືການຕິດຕາມກວດກາ ການປະເມີນຜົນ ການຈັດຕັ້ງປະຕິບັດກົດໝາຍ

ຈັດພິມໂດຍ ກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ, ກຳມາທິການກົດໝາຍ

WFD 30 years of impact

ສະຫະພາບ ເອີຣົບ European Union

ການ ຮ່ວມມື ເຢຍລະມັນ DEUTSCHE ZUSAMMENARBEIT

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

Implemented by giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

# ຄຳເຫັນ
## ທ່ານຮອງປະທານສະພາແຫ່ງຊາດ, ປະທານກຳມາທິການກົດໝາຍ

ນັບແຕ່ໄດ້ສະຖາປະນາ ສປປ ລາວ ເປັນຕົ້ນມາ ລັດເຮົາໄດ້ປະກາດໃຊ້ກົດໝາຍ ເປັນຈຳນວນຫຼາຍພໍສົມຄວນ ຊຶ່ງໄດ້ກາຍເປັນເຄື່ອງມືທີ່ສຳຄັນຂອງລັດ ໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ, ລວມໝູ່, ນິຕິບຸກຄົນ ແລະ ບຸກຄົນ, ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ການດຶງດູດການລົງທຶນ ພາຍໃນ ແລະ ຕ່າງປະເທດເພື່ອພັດທະນາເສດຖະກິດ-ສັງຄົມ.

ເພື່ອເປັນບ່ອນອີງໃຫ້ແກ່ກຳມາທິການຂອງສະພາແຫ່ງຊາດ ກ່ຽວກັບວຽກງານຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ກຳມາທິການກົດໝາຍ ໄດ້ມອບໝາຍໃຫ້ກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ ເປັນຜູ້ຄົ້ນຄວ້າ ແລະ ສ້າງຄູ່ມືການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຊຶ່ງເປົ້າໝາຍຂອງຄູ່ມືສະບັບນີ້ແມ່ນເພື່ອເປັນບ່ອນອີງໃຫ້ບັນດາກຳມາທິການຂອງສະພາແຫ່ງຊາດ ໄດ້ຄົ້ນຄວ້ານຳໃຊ້ ເພື່ອປະຕິບັດພາລະບົດບາດຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແລະ ກົດໝາຍວ່າດ້ວຍການສ້າງນິຕິກຳ ແນໃສ່ເຮັດໃຫ້ວຽກງານດັ່ງກ່າວ ເປັນລະບົບຄົບຊຸດ, ມີປະສິດທິພາບ, ຮັດກຸມ ແລະ ເປັນເອກະພາບ.

ຄູ່ມືສະບັບນີ້ ໄດ້ໃຫ້ຂໍ້ມູນ ກ່ຽວກັບຂັ້ນຕອນ ແລະ ຮູບການ ໃນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ, ອະທິບາຍກ່ຽວກັບແບບພິມ ແລະ ໂຄງຮ່າງ ແຜນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ, ບົດລາຍງານການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ແລະ ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍ ການຮັບຮອງເອົາຜົນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ເປັນອັນລະອຽດ.

ຂ້າພະເຈົ້າ ສະແດງຄວາມຊົມເຊີຍມາຍັງກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ ກໍາມາທິການກົດໝາຍ ທີ່ໄດ້ເອົາໃຈໃສ່, ສຸມທຸກເຫື່ອແຮງ ແລະ ສະຕິປັນຍາ ເຂົ້າໃນການຄົ້ນຄວ້າ, ສ້າງຄູ່ມືການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ແລະ ສະແດງຄວາມຂອບໃຈມາຍັງໂຄງການເວສມິນສະເຕີ ເພື່ອປະຊາທິປະໄຕ (WFD) ທີ່ໃຫ້ການຊ່ວຍເຫຼືອ, ສະໜັບສະໜູນທາງດ້ານງົບປະມານ ໃນການສ້າງຄູ່ມືດັ່ງກ່າວ.

ຂ້າພະເຈົ້າ ຫວັງເປັນຢ່າງຍິ່ງວ່າ ຄູ່ມືສະບັບນີ້ ຈະເປັນປະໂຫຍດ ແລະ ເປັນເຄື່ອງມືໃຫ້ແກ່ບັນດາກໍາມາທິການຂອງສະພາແຫ່ງຊາດ ກໍຄື ສະມາຊິກສະພາແຫ່ງຊາດ ນໍາໃຊ້ເຂົ້າໃນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ. ເຖິງຢ່າງໃດກໍຕາມ ໃນການຄົ້ນຄວ້າ, ສ້າງຄູ່ມືສະບັບນີ້ ອາດປາສະຈາກບໍ່ໄດ້ຂໍ້ຂາດຕົກບົກຜ່ອງ ກໍາມາທິການກົດໝາຍ ຍິນດີຮັບເອົາຄໍາເຫັນ ແລະ ການຕໍານິຕິຊົມ ຈາກບັນດາທ່ານ ເພື່ອຈະໄດ້ປັບປຸງໃຫ້ດີຂຶ້ນກວ່າເກົ່າ.

**ຮອງປະທານສະພາແຫ່ງຊາດ,**
**ປະທານກໍາມາທິການກົດໝາຍ**




**ສຈ ປອ ຈະເລີນ ເຢຍປາວເຮີ**

## ສາລະບານ

| ເນື້ອໃນ | ໜ້າ |
| --- | --- |


I. ຈຸດປະສົງ.................................................... 1

II. ເນື້ອໃນ.................................................... 1

III. ຂັ້ນຕອນ ແລະ ຮູບການ.................................... 2

1. ຂັ້ນຕອນ.................................................... 2

1.1 ການສ້າງແຜນການຕິດຕາມກວດກາ ການປະເມີນຜົນ ການຈັດຕັ້ງປະຕິບັດກົດໝາຍ.................................... 2

1.2 ການດຳເນີນການຕິດຕາມກວດກາ ການປະເມີນຜົນ ການຈັດຕັ້ງປະຕິບັດກົດໝາຍ.................................... 3

1.3 ການລາຍງານ ແລະ ພິຈາລະນາຜົນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ.............................. 3

ກ. ການລາຍງານ ແລະ ພິຈາລະນາຜົນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃນກອງປະຊຸມຄະນະປະຈຳສະພາແຫ່ງຊາດ.................................................... 4

ຂ. ການລາຍງານ ແລະ ພິຈາລະນາຜົນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃນກອງປະຊຸມສະພາແຫ່ງຊາດ.................................................... 4

2. ຮູບການ.................................................... 5

1) ການເກັບກຳຂໍ້ມູນຕົວຈິງ.................................... 5

2) ການເກັບກຳຂໍ້ມູນດ້ວຍການສອບຖາມເປົ້າໝາຍ....... 6

3) ການຈັດກອງປະຊຸມ.................................... 6

IV. ແບບພິມ.......................................................... 7
V. ໂຄງຮ່າງແຜນການ, ບົດລາຍງານ, ບົດປະກອບຄໍາເຫັນຂອງຄະນະ
ປະຈໍາສະພາແຫ່ງຊາດ ແລະ ມະຕິກອງປະຊຸມສະພາແຫ່ງຊາດ............. 11
ໂຄງຮ່າງແຜນການ.................................................... 11
ໂຄງຮ່າງບົດລາຍງານຂອງກໍາມາທິການ................................ 17
ໂຄງຮ່າງບົດລາຍງານ ສໍາລັບກະຊວງ, ອົງການ........................ 21
ໂຄງຮ່າງບົດປະກອບຄໍາເຫັນຂອງຄະນະປະຈໍາສະພາແຫ່ງຊາດ....... 25
ໂຄງຮ່າງມະຕິກອງປະຊຸມສະພາແຫ່ງຊາດ........................ 28
ມະຕິຂອງຄະນະປະຈໍາສະພາແຫ່ງຊາດ ວ່າດ້ວຍ ການຕິດຕາມກວດກາ
ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ............................... 32

# ຄູ່ມື
# ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ

## I. ຈຸດປະສົງ

ຄູ່ມືສະບັບນີ້ສ້າງຂຶ້ນ ເພື່ອຜັນຂະຫຍາຍມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍ ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ສະບັບເລກທີ 53/ຄປຈ, ລົງວັນທີ 23 ສິງຫາ 2022 ເປັນການແນະນຳ, ອະທິບາຍ ກ່ຽວກັບຂັ້ນຕອນ ແລະ ຮູບການ ໃນການຈັດຕັ້ງປະຕິບັດວຽກງານຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ເພື່ອເປັນບ່ອນອີງໃຫ້ແກ່ບັນດາກຳມາທິການຂອງສະພາແຫ່ງຊາດ ປະຕິບັດໃຫ້ມີຄວາມເປັນເອກະພາບ.

## II. ເນື້ອໃນ

ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການໂຄສະນາ ເຜີຍແຜ່ ແລະ ຍົກສູງສະຕິເຄົາລົບກົດໝາຍ;
2. ການສ້າງ ຫຼື ກົນໄກການຈັດຕັ້ງປະຕິບັດກົດໝາຍ ລວມທັງການຜັນຂະຫຍາຍມາດຕາຂອງກົດໝາຍເປັນນິຕິກຳໃຕ້ກົດໝາຍ;
3. ການກວດກາກົດໝາຍໃນບາງມາດຕາ ທີ່ມີບາງເນື້ອໃນຂັດກັນ, ເປັນຊ່ອງວ່າງ, ມີຜົນກະທົບ ຫຼື ສາເຫດທີ່ບໍ່ສາມາດຈັດຕັ້ງປະຕິບັດໄດ້;
4. ຜົນການຈັດຕັ້ງປະຕິບັດກົດໝາຍ ລວມທັງຂໍ້ຄົງຄ້າງ, ສາເຫດ ແລະ ບົດຮຽນທີ່ຖອດຖອນໄດ້.

## III. ຂັ້ນຕອນ ແລະ ຮູບການ

### 1. ຂັ້ນຕອນ

**1.1. ການສ້າງແຜນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ**

ການສ້າງແຜນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃຫ້ປະຕິບັດ ດັ່ງນີ້:

1) ກຳມາທິການກົດໝາຍ ສົມທົບກັບບັນດາກຳມາທິການຂອງສະພາແຫ່ງຊາດ ຄົ້ນຄວ້າ, ສ້າງຮ່າງແຜນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂອງຄະນະປະຈຳສະພາແຫ່ງຊາດ ປະຈຳປີ ຫຼື ເປັນແຕ່ລະໄລຍະ;

2) ພາຍຫຼັງສຳເລັດການຮ່າງແຜນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂອງຄະນະປະຈຳສະພາແຫ່ງຊາດແລ້ວ ກຳມາທິການກົດໝາຍ ສົ່ງຮ່າງແຜນການດັ່ງກ່າວ ໃຫ້ກຳມາທິການອື່ນຂອງສະພາແຫ່ງຊາດ ເພື່ອຄົ້ນຄວ້າ, ປະກອບຄຳເຫັນ;

3) ກຳມາທິການກົດໝາຍ ປັບປຸງຮ່າງແຜນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂອງຄະນະປະຈຳສະພາແຫ່ງຊາດ ຕາມການປະກອບຄຳເຫັນ ຂອງກຳມາທິການອື່ນຂອງສະພາແຫ່ງຊາດ ແລ້ວລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ, ຮັບຮອງເອົາ ແຜນການດັ່ງກ່າວ;

4) ກຳມາທິການທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ ຜັນຂະຫຍາຍແຜນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂອງຄະນະປະຈຳສະພາແຫ່ງຊາດ ມາເປັນແຜນການຕິດຕາມກວດກາ ການປະເມີນການຜົນຈັດຕັ້ງປະຕິບັດກົດໝາຍ ຂອງກຳມາທິການຕົນ.

ສຳລັບໂຄງຮ່າງລະອຽດ ຂອງແຜນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂອງກຳມາທິການຂອງສະພາແຫ່ງຊາດ ໄດ້ກຳນົດໄວ້ໃນ V ຂອງຄູ່ມືສະບັບນີ້.

**1.2. ການດຳເນີນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ**

ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂອງກຳມາທິການຂອງສະພາແຫ່ງຊາດ ໃຫ້ດຳເນີນ ດັ່ງນີ້:

1) ພາຍຫຼັງສຳເລັດແຜນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂອງຕົນແລ້ວ ໃຫ້ຄົ້ນຄວ້າ, ກະກຽມເອກະສານ ເປັນຕົ້ນ ໜັງສືສະເໜີ, ຄຳແນະນຳ, ແບບພິມ, ຄຳຖາມເຈາະຈີ້ມ ແລະ ເອກະສານອື່ນ;

2) ສົ່ງ ໜັງສືສະເໜີ, ຄຳແນະນຳ, ແບບພິມ, ຄຳຖາມເຈາະຈີ້ມ ແລະ ເອກະສານອື່ນ ລວມທັງແຜນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃຫ້ອົງການລັດທີ່ຮັບຜິດຊອບປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ເພື່ອຄົ້ນຄວ້າ, ກະກຽມ ແລະ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ;

3) ພົວພັນ, ປະສານສົມທົບກັບ ອົງການລັດທີ່ຮັບຜິດຊອບປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;

4) ຕິດຕາມກວດກາ ແລະ ຊຸກຍູ້ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໂດຍຈັດກອງປະຊຸມຮ່ວມກັບ ອົງການລັດທີ່ຮັບຜິດຊອບປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ແລະ ລົງເກັບກຳຂໍ້ມູນຢູ່ບາງທ້ອງຖິ່ນ;

5) ສະຫຼຸບ, ສັງລວມ ຜົນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ;

6) ຮ່າງບົດລາຍງານຜົນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ.

**1.3. ການລາຍງານ ແລະ ພິຈາລະນາ ຜົນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ**

ການລາຍງານ ແລະ ພິຈາລະນາ ຜົນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃນກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມສະພາແຫ່ງຊາດ ໃຫ້ປະຕິບັດ ດັ່ງນີ້:

**ກ. ການລາຍງານ ແລະ ພິຈາລະນາ ຜົນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃນກອງປະຊຸມຄະນະປະຈຳສະພາແຫ່ງຊາດ**

1) ປະທານກຳມາທິການກົດໝາຍ ຫຼື ປະທານກຳມາທິການທີ່ກ່ຽວຂ້ອງ ເປັນຜູ້ລາຍງານຜົນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ;

2) ປະທານກອງປະຊຸມ ມີຄຳເຫັນເຈາະຈີ້ມ;

3) ກອງປະຊຸມ ປະກອບຄຳເຫັນ ຫຼື ຕັ້ງຄຳຖາມໃສ່ບົດລາຍງານຜົນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ;

4) ອົງການລັດທີ່ຮັບຜິດຊອບປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຊີ້ແຈງ ຫຼື ຕອບຄຳຖາມທີ່ໄດ້ຍົກຂຶ້ນ;

5) ປະທານກອງປະຊຸມ ມີຄຳເຫັນສະຫຼຸບ ແລະ ສະເໜີໃຫ້ກອງປະຊຸມ ຮັບຮອງເອົາ.

**ຂ. ການລາຍງານ ແລະ ພິຈາລະນາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃນກອງປະຊຸມສະພາແຫ່ງຊາດ**

1) ປະທານປະເທດ, ລັດຖະບານ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

2) ຄະນະປະຈຳສະພາແຫ່ງຊາດ ປະກອບຄຳເຫັນ;

3) ປະທານກອງປະຊຸມ ມີຄຳເຫັນເຈາະຈີ້ມ;

4) ສະມາຊິກສະພາແຫ່ງຊາດ ປະກອບຄຳເຫັນ ຫຼື ຕັ້ງຄຳຖາມ;

5) ອົງການລັດທີ່ຮັບຜິດຊອບປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຊີ້ແຈງ ຫຼື ຕອບຄຳຖາມທີ່ໄດ້ຍົກຂຶ້ນ;

6) ກອງປະຊຸມ ລົງຄະແນນສຽງຮັບຮອງເອົາ.

ສຳລັບການລາຍງານ ແລະ ພິຈາລະນາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂົງເຂດສະພາແຫ່ງຊາດ ໃຫ້ປະຕິບັດ ດັ່ງນີ້:

1) ຄະນະປະຈຳສະພາແຫ່ງຊາດ ລາຍງານ;

2) ປະທານກອງປະຊຸມ ມີຄຳເຫັນເຈາະຈີ້ມ;

3) ສະມາຊິກສະພາແຫ່ງຊາດ ປະກອບຄຳເຫັນ ຫຼື ຕັ້ງຄຳຖາມ;

4) ຄະນະປະຈຳສະພາແຫ່ງຊາດ ຊີ້ແຈງ ຫຼື ຕອບຄຳຖາມທີ່ໄດ້ຍົກຂຶ້ນ;

5) ກອງປະຊຸມ ລົງຄະແນນສຽງຮັບຮອງເອົາ.

## 2. ຮູບການ

ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ມີ ຮູບການ ດັ່ງນີ້:

### 1) ການເກັບກຳຂໍ້ມູນຕົວຈິງ

ການເກັບກຳຂໍ້ມູນຕົວຈິງ ໃຫ້ປະຕິບັດ ດັ່ງນີ້:

- ການລາຍງານ ຂອງອົງການລັດທີ່ຮັບຜິດຊອບປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ;
- ການສະໜອງຂໍ້ມູນ ຂອງຜູ້ທີ່ໄດ້ຮັບຜົນກະທົບໂດຍກົງຈາກການຈັດຕັ້ງປະຕິບັດກົດໝາຍ;
- ການເກັບກຳຂໍ້ມູນ ຜ່ານໂທລະສັບສາຍດ່ວນຂອງສະພາແຫ່ງຊາດ;

- ການລົງເກັບກຳຂໍ້ມູນ ຢູ່ ສະຖານທີ່ຕົວຈິງ;
- ການສະເໜີຂໍຂໍ້ມູນ ຈາກພາກສ່ວນອື່ນ.

**2) ການເກັບກຳຂໍ້ມູນດ້ວຍການສອບຖາມເປົ້າໝາຍ**

ການເກັບກຳຂໍ້ມູນດ້ວຍການສອບຖາມເປົ້າໝາຍ ໃຫ້ປະຕິບັດ ດັ່ງນີ້:

- ການສອບຖາມ ເຊິ່ງໜ້າ ຫຼື ການສຳພາດ;
- ການສອບຖາມ ຜ່ານແບບພິມ;
- ການສອບຖາມ ຜ່ານສື່ເອເລັກໂຕຣນິກ.

**3) ການຈັດກອງປະຊຸມ**

ການຈັດກອງປະຊຸມ ໃຫ້ປະຕິບັດ ດັ່ງນີ້:

- ເປົ້າໝາຍທີ່ຖືກຕິດຕາມກວດກາ ລາຍງານ;
- ປະທານກອງປະຊຸມ ມີຄຳເຫັນເຈາະຈີ້ມ;
- ຜູ້ເຂົ້າຮ່ວມກອງປະຊຸມ ຄົ້ນຄວ້າ, ປະກອບຄຳເຫັນ;
- ເປົ້າໝາຍທີ່ຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ;
- ປະທານກອງປະຊຸມ ສັງລວມຄຳເຫັນ ແລະ ໃຫ້ທິດຊີ້ນຳ.

## IV. ແບບພິມ

### ແບບພິມການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ....................

### 1. ຂໍ້ມູນເບື້ອງຕົ້ນ

1) ຊື່ອົງການລັດທີ່ຮັບຜິດຊອບປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ:...............................

2) ຊື່ກົມກ່ຽວຂ້ອງ:......................................................

3) ສາເຫດຂອງການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ: (ສາມາດເລືອກໄດ້ຫຼາຍກວ່າ 1 ຂໍ້)

ກ. ຜ່ານການຕິດຕາມກວດກາການຈັດຕັ້ງປະຕິບັດ;

ຂ. ມີການສະເໜີຈາກພາກສ່ວນທີ່ກ່ຽວຂ້ອງ;

ຄ. ອື່ນໆ ຄື.......................................

4) ວັນທີ່ກົດໝາຍມີຜົນສັກສິດ..........................................

5) ວັນທີ່ເລີ່ມການປະເມີນຜົນ.............................................

### 2. ການຄົ້ນຄວ້າຄວາມຈຳເປັນ ແລະ ຜົນກະທົບຂອງກົດໝາຍ

1) ກົດໝາຍສະບັບນີ້ ມີ ຈຸດປະສົງຫຍັງ ແລະ ເພື່ອແກ້ໄຂບັນຫາໃດ?

2) ມາດຕະການ ທີ່ສາມາດເຮັດໃຫ້ບັນລຸຈຸດປະສົງດັ່ງກ່າວ ມີຫຍັງແດ່?

3) ກົດໝາຍສະບັບນີ້ ມີ ຜົນກະທົບຕໍ່ສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວບັນດາເຜົ່າ ຫຼື ບໍ່, ຖ້າມີ ມີຫຼາຍໜ້ອຍພຽງໃດ?

4) ການສັງລວມຂໍ້ມູນ, ຄຳເຫັນ ຈາກສື່ເອເລັກໂຕຣນິກ ມີ ຄືແນວໃດ? (ຖ້າມີ)

5) ກົດໝາຍສະບັບນີ້ ມີ ຄວາມສອດຄ່ອງກັບສະພາບເສດຖະກິດ-ສັງຄົມ, ການພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ແລະ ການດຳລົງຊີວິດຂອງປະຊາຊົນລາວບັນດາເຜົ່າ ຄືແນວໃດ?

6) ຜົນປະໂຫຍດທີ່ໄດ້ຮັບ ຈາກການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ມີ ອັນໃດແດ່?

7) ກົດໝາຍສະບັບນີ້ ມີ ຜົນກະທົບດັ່ງຕໍ່ໄປນີ້ ຫຼື ບໍ່? (ສາມາດພິຈາລະນາຕອບສະເພາະປະເດັນທີ່ສຳຄັນ ແລະ ສອດຄ່ອງກັບຈຸດປະສົງຂອງກົດໝາຍ ໂດຍບໍ່ຈຳເປັນຕ້ອງຕອບທຸກປະເດັນກໍໄດ້)

ກ. ມີຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນລາວບັນດາເຜົ່າ ຄືແນວໃດ?

ຂ. ເປັນອຸປະສັກໃນການແຂ່ງຂັນ ຫຼື ເພີ່ມຂີດຄວາມສາມາດໃນການແຂ່ງຂັນ ພາຍໃນ ແລະ ຕ່າງປະເທດ ຄືແນວໃດ?

ຄ. ຄວາມສອດຄ່ອງກັບ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ມີ ຄືແນວໃດ?

ງ. ຜົນກະທົບຕໍ່ ເສດຖະກິດ-ສັງຄົມ, ສິ່ງແວດລ້ອມ, ສຸຂານາໄມ ຫຼື ຜົນກະທົບອື່ນທີ່ສຳຄັນ ມີ ຄືແນວໃດ?

8) ສະຖິຕິໃນການດຳເນີນຄະດີ ແລະ ການລົງໂທດ ຕາມກົດໝາຍສະບັບນີ້ (ຖ້າມີ)

9) ອຸປະສັກ ແລະ ບັນຫາໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ມີ ຄືແນວໃດ?

**3. ການກວດກາເນື້ອໃນຂອງກົດໝາຍ**

1) ກົດໝາຍສະບັບນີ້ ມີ ການພົວພັນ ຫຼື ຄ້າຍຄືກົດໝາຍສະບັບອື່ນ ຫຼື ບໍ່?

2) ກົດໝາຍສະບັບນີ້ ມີ ການກຳນົດການກະທຳຜິດທາງອາຍາ ແລະ ໂທດ ຫຼື ບໍ່, ຖ້າມີ ການກະທຳຜິດ ແລະ ໂທດດັ່ງກ່າວ ຍັງມີຄວາມເໝາະສົມ ຫຼື ບໍ່?

**4. ຜົນການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ**

1) ການນຳເອົາ ບົດປະເມີນຜົນກະທົບຂອງຮ່າງກົດໝາຍໃນເບື້ອງຕົ້ນ ມາສົມທຽບກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຕົວຈິງ ມີ ຄື ແນວໃດ?

2) ກົດໝາຍສະບັບນີ້ ໄດ້ຮັບການໂຄສະນາ ເຜີຍແຜ່ ຢ່າງທົ່ວເຖິງ ພາຍໃນຂະແໜງການຂອງຕົນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ແຕ່ສູນກາງ ລົງຮອດຮາກຖານ ຄືແນວໃດ?

3) ການຜັນຂະຫຍາຍກົດໝາຍອອກເປັນນິຕິກຳໃຕ້ກົດໝາຍ ມີ ຄື ແນວໃດ? (ມີ ຈັກມາດຕາທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ, ຜັນຂະຫຍາຍສຳເລັດ ມີຈັກມາດຕາ, ຍັງບໍ່ທັນໄດ້ຜັນຂະຫຍາຍ ມີ ຈັກມາດຕາ)

4) ກົດໝາຍສະບັບນີ້ ຂັດກັບກົດໝາຍສະບັບອື່ນ, ເປັນຊ່ອງວ່າງ, ມີ ຜົນກະທົບ ຫຼື ມີ ສາເຫດທີ່ພາໃຫ້ບໍ່ສາມາດຈັດຕັ້ງປະຕິບັດໄດ້ ຄືແນວໃດ?

5) ການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ມີ ການລະເມີດຫຼາຍກວ່າໝູ່ ແມ່ນ ມາດຕາໃດ, ກ່ຽວກັບບັນຫາໃດ ແລະ ຈະມີວິທີການແກ້ໄຂ ຄືແນວໃດ?

6) ຜົນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ມີ ຄືແນວໃດ?

7) ຂໍ້ຄົງຄ້າງໃຫຍ່ ໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ແລະ ສາເຫດ ມີ ຄືແນວໃດ?

8) ບົດຮຽນທີ່ຖອດຖອນໄດ້ ມີ ຄືແນວໃດ?

**5. ຂໍ້ສະເໜີ**

1) ...................................................................................;

2) ....................................................................................;

3) ...............................................................................

ລັດຖະມົນຕີ/ຫົວໜ້າອົງການ

(ເຊັນ ແລະ ປະທັບຕາ)

## V. ໂຄງຮ່າງ ແຜນການ, ບົດລາຍງານ, ບົດປະກອບຄໍາເຫັນຂອງຄະນະປະຈໍາສະພາແຫ່ງຊາດ ແລະ ມະຕິກອງປະຊຸມສະພາແຫ່ງຊາດ

**ໂຄງຮ່າງແຜນການ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ
ກໍາມາທິການ.................. ເລກທີ....... /.......
ນະຄອນຫຼວງວຽງຈັນ, ວັນທີ........................

**(ຮ່າງ)**
**ແຜນການ**
**ຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດ**
**ກົດໝາຍວ່າດ້ວຍ...................**

– ອີງຕາມກົດໝາຍວ່າດ້ວຍການຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 12/ສພຊ, ລົງວັນທີ 15 ພະຈິກ 2016;

– ອີງຕາມກົດໝາຍວ່າດ້ວຍການສ້າງນິຕິກໍາ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;

– ອີງຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍ ການຕິດຕາມ ກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ສະບັບເລກທີ 53/ ຄປຈ, ລົງວັນທີ 23 ສິງຫາ 2022.

## I. ຄວາມສຳຄັນ ແລະ ຄວາມຈຳເປັນ

.........................................................................................
.........................................................................................

## II. ຈຸດປະສົງ ແລະ ຄາດໝາຍ

.........................................................................................
.........................................................................................

## III. ເນື້ອໃນ

ກົດໝາຍທີ່ຈະດຳເນີນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດຄັ້ງນີ້ ມີ ຈຳນວນ ....... ສະບັບ ຄື:

1. ກົດໝາຍວ່າດ້ວຍ..........................;
2. ກົດໝາຍວ່າດ້ວຍ..........................;
3. ກົດໝາຍວ່າດ້ວຍ..........................

ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃຫ້ເລັ່ງໃສ່ເນື້ອໃນ ດັ່ງນີ້:

1. ການໂຄສະນາ ເຜີຍແຜ່ ແລະ ຍົກສູງສະຕິເຄົາລົບກົດໝາຍ;
2. ການສ້າງ ຫຼື ກົນໄກການຈັດຕັ້ງປະຕິບັດກົດໝາຍ ລວມທັງການຜັນຂະຫຍາຍເປັນນິຕິກຳໃຕ້ກົດໝາຍ ເປັນອັນລະອຽດ;
3. ການກວດກາ ກົດໝາຍໃນບາງມາດຕາທີ່ມີບາງເນື້ອໃນຂັດກັນ, ເປັນຊ່ອງວ່າງ, ມີ ຜົນກະທົບ ຫຼື ສາເຫດທີ່ພາໃຫ້ບໍ່ສາມາດຈັດຕັ້ງປະຕິບັດໄດ້.

## IV. ທິດທາງ

ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ........... ສະບັບດັ່ງກ່າວ ໃຫ້ປະຕິບັດຕາມທິດທາງ ດັ່ງນີ້:

1. ..................................................................................................................;

2. ..................................................................................................................;

3. ..................................................................................................................

## V. ບາດກ້າວ

**1. ບາດກ້າວທີ 1: ກະກຽມຄວາມພ້ອມຮອບດ້ານ (ຄາດຄະເນເວລາ........)**

– ກະກຽມເອກະສານສຳຄັນຕ່າງໆ ເຊັ່ນ: ..................................... (ເປັນຕົ້ນ ແຜນການ, ໜັງສືສະເໜີ, ແບບພິມ, ຄຳຖາມເຈາະຈີ້ມ ແລະ ເອກະສານອື່ນ);

– ຈັດກອງປະຊຸມປຶກສາຫາລື ເພື່ອຄວາມເປັນເອກະພາບກັບ ........................... (ເປັນຕົ້ນ ກຳມາທິການອື່ນທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ, ອົງການລັດທີ່ຮັບຜິດຊອບປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ກະຊວງຍຸຕິທຳ, ອົງການລັດອື່ນທີ່ກ່ຽວຂ້ອງ, ພາກສ່ວນທຸລະກິດ);

– ພົວພັນ, ປະສານສົມທົບກັບ ອົງການລັດທີ່ຮັບຜິດຊອບປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ແລະ ພາກສ່ວນກ່ຽວຂ້ອງ ກ່ຽວກັບ ..........................................................................................;

– ..........................................................................................................................;

**2. ບາດກ້າວທີ 2: ຕິດຕາມກວດກາ ແລະ ເກັບກຳຂໍ້ມູນ ຢູ່ ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ (ຄາດຄະເນເວລາ............)**

**1) ຢູ່ ບັນດາກະຊວງ, ອົງການ............................**

– ຕິດຕາມກວດກາ ແລະ ເກັບກຳຂໍ້ມູນ ຢູ່ ກະຊວງ/ອົງການ..................................................................;

– ເປົ້າໝາຍເຂົ້າຮ່ວມ ມີ ລັດຖະມົນຕີ, ຮອງລັດຖະມົນຕີ/ຫົວໜ້າ, ຮອງຫົວໜ້າອົງການ; ຫົວໜ້າ, ຮອງຫົວໜ້າກົມ ແລະ ພະນັກງານວິຊາການ ທີ່ກ່ຽວຂ້ອງ ຂອງກະຊວງ/ອົງການ. ນອກຈາກນັ້ນ, ຍັງມີພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ ຮອງປະທານກຳມາທິການອື່ນທີ່ກ່ຽວຂ້ອງຂອງສະພາແຫ່ງຊາດ; ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ; ຮອງລັດຖະມົນຕີກະຊວງຍຸຕິທຳ; ຜູ້ຕາງໜ້າຈາກ ພາກສ່ວນທຸລະກິດ ແລະ ອົງການອື່ນທີ່ກ່ຽວຂ້ອງ;

– ລັດຖະມົນຕີ/ຫົວໜ້າອົງການ ລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຕໍ່ກອງປະຊຸມ;

– ກອງປະຊຸມ ປະກອບຄຳເຫັນ;

– ກອງປະຊຸມ ສະຫຼຸບຖອດຖອນບົດຮຽນ.

**2) ຢູ່ ທ້ອງຖິ່ນ**

– ລົງຕິດຕາມກວດກາ ແລະ ເກັບກຳຂໍ້ມູນ ຢູ່ແຂວງ ..................................................................;

– ເປົ້າໝາຍເຂົ້າຮ່ວມ ມີ ຫົວໜ້າ, ຮອງຫົວໜ້າພະແນກ/ຫົວໜ້າ, ຮອງຫົວໜ້າອົງການຂັ້ນແຂວງ; ຫົວໜ້າ, ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງ ຂອງພະແນກ, ອົງການຂັ້ນແຂວງ. ນອກຈາກນັ້ນ, ຍັງມີພາກສ່ວນທີ່ກ່ຽວຂ້ອງ ເປັນຕົ້ນ ປະທານ, ຮອງປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ; ສະມາຊິກສະພາປະຊາຊົນຂັ້ນແຂວງ; ປະທານ, ຮອງປະທານສະພາປະຊາຊົນຂັ້ນແຂວງ; ປະທານຄະນະກຳມະການທີ່ກ່ຽວຂ້ອງ ຂອງສະພາປະຊາຊົນຂັ້ນແຂວງ; ເລຂາທິການສະພາປະຊາຊົນຂັ້ນແຂວງ; ຮອງເຈົ້າແຂວງ; ຫົວໜ້າຫ້ອງວ່າການແຂວງ; ຫົວໜ້າພະ

ແນກຍຸຕິທຳແຂວງ; ເຈົ້າເມືອງ, ເຈົ້ານະຄອນ; ຜູ້ຕາງໜ້າຈາກ ພາກສ່ວນທຸລະກິດ ແລະ ອົງການອື່ນທີ່ກ່ຽວຂ້ອງ;

– ຫົວໜ້າພະແນກ/ຫົວໜ້າອົງການຂັ້ນແຂວງ ລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຕໍ່ກອງປະຊຸມ;

– ກອງປະຊຸມ ປະກອບຄຳເຫັນ;

– ກອງປະຊຸມ ສະຫຼຸບຖອດຖອນບົດຮຽນ.

**3. ບາດກ້າວທີ 3: ສະຫຼຸບຕີລາຄາ ແລະ ລາຍງານຄະນະປະຈຳສະພາແຫ່ງຊາດ ເພື່ອຂໍທິດຊີ້ນຳ (ຄາດຄະເນເວລາ.................)**

– ຈັດກອງປະຊຸມສະຫຼຸບຕີລາຄາ ແລະ ຖອດຖອນບົດຮຽນກ່ຽວກັບການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ;

– ກະກຽມເນື້ອໃນບົດປະກອບຄຳເຫັນ ຂອງຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ;

– ກະກຽມຮ່າງມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍ ການຮັບຮອງເອົາບົດລາຍງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ.

**4. ບາດກ້າວທີ 4: ລາຍງານຕໍ່ ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມສະພາແຫ່ງຊາດ**

– ສະຫຼຸບສັງລວມ ແລະ ລາຍງານຄະນະປະຈຳສະພາແຫ່ງຊາດ;

– ອອກມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍ ການຮັບຮອງເອົາບົດລາຍງານ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ.

## VI. ການປະກອບຄະນະ

### 1. ຄະນະຊີ້ນຳ:

1) ປະທານກຳມາທິການກົດໝາຍ ຫຼື ປະທານກຳມາທິການທີ່ກ່ຽວຂ້ອງກັບກົດໝາຍນັ້ນ ເປັນຫົວໜ້າ;

2) ຮອງປະທານກຳມາທິການກົດໝາຍ ເປັນຮອງຫົວໜ້າ;

3) ຮອງປະທານກຳມາທິການອື່ນ................. ເປັນຄະນະ;

4) ..............................................................;

5) ..............................................................

(ການກຳນົດຈຳນວນຄະນະຊີ້ນຳ ໃຫ້ອີງໃສ່ຄວາມເໝາະສົມ)

**2. ກອງເລຂາ:**

1) ຫົວໜ້າກົມ......................... ເປັນຫົວໜ້າ (ກົມທີ່ກ່ຽວຂ້ອງຂອງກຳມາທິການ);

2) ຮອງຫົວໜ້າກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ ເປັນຮອງຫົວໜ້າ;

3) ພະນັກງານວິຊາການຂອງ ກົມ........................ ແລະ ກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ ຈຳນວນໜຶ່ງ ເປັນຄະນະ.

## VII. ວັນເວລາ ແລະ ງົບປະມານ

1. ວັນເວລາ:...........................................................
2. ງົບປະມານ:........................................................

**ປະທານກຳມາທິການ**

**(ເຊັນ ແລະ ປະທັບຕາ)**

ໂຄງຮ່າງບົດລາຍງານຂອງກຳມາທິການ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ

ກຳມາທິການ............... ເລກທີ........./.............

ນະຄອນຫຼວງວຽງຈັນ, ວັນທີ.........................

(ຮ່າງ)

**ບົດລາຍງານ**

**ຮຽນ: ທ່ານປະທານຄະນະປະຈຳສະພາແຫ່ງຊາດ ທີ່ເຄົາລົບ ແລະ ນັບຖືຢ່າງສູງ**

**ເລື່ອງ: ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ.....................**

– ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015;

– ອີງຕາມກົດໝາຍວ່າດ້ວຍການຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 12/ສພຊ, ລົງວັນທີ 15 ພະຈິກ 2016;

– ອີງຕາມກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;

– ອີງຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍ ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ສະບັບເລກທີ 53/ຄປຈ, ລົງວັນທີ 23 ສິງຫາ 2022;

– ອີງຕາມ ແຜນການ........................................................

ກຳມາທິການ............. ຂໍຣຽນລາຍງານມາຍັງທ່ານປະທານຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ.................................ດັ່ງນີ້:

## I. ສະພາບລວມການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ

### 1. ການກະກຽມ

.......................................................................................

.......................................................................................

.................................................................................

### 2. ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ

ຜ່ານການເຄື່ອນໄຫວຕິດຕາມກວດກາ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ.......... ມີ ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກດັ່ງນີ້:

2.1. ຂໍ້ສະດວກ

.......................................................................................

.......................................................................................

.......................................................................................

2.2. ຂໍ້ຫຍຸ້ງຍາກ

..........................................................................................

..........................................................................................

**II. ຕີລາຄາສະພາບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ......................**

ຜ່ານການເຄື່ອນໄຫວຕິດຕາມກວດກາ, ເກັບກຳຂໍ້ມູນ ແລະ ສັງລວມບົດລາຍງານ ຂອງທ້ອງຖິ່ນ ແລະ ກະຊວງ, ອົງການທີ່ກ່ຽວຂ້ອງ ສາມາດສະຫຼຸບຕີລາຄາການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ .............. ດັ່ງນີ້:

**1. ດ້ານດີ**

..........................................................................................

..........................................................................................

..........................................................................................

**2. ດ້ານອ່ອນ**

..........................................................................................

..........................................................................................

..........................................................................................

**3. ສາເຫດທີ່ພາໃຫ້ມີດ້ານດີ, ດ້ານອ່ອນ ແລະ ບົດຮຽນທີ່ຖອດຖອນໄດ້**

3.1. ສາເຫດທີ່ພາໃຫ້ມີດ້ານດີ

....................................................................................

3.2. ສາເຫດທີ່ພາໃຫ້ມີດ້ານອ່ອນ

...............................................................................

3.3. ບົດຮຽນທີ່ຖອດຖອນໄດ້

.........................................................................................

## III. ຂໍ້ສະເໜີ

ຜ່ານການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ........................ ກຳມາທິການ............. ມີຂໍ້ສະເໜີ ດັ່ງນີ້:

**1. ຂໍ້ສະເໜີລວມ**

...............................................................................................

.........................................................................................

**2. ຂໍ້ສະເໜີປັບປຸງເນື້ອໃນກົດໝາຍ**

...............................................................................................

.........................................................................................

ດັ່ງນັ້ນ, ຈຶ່ງລາຍງານມາຍັງທ່ານ ເພື່ອຊາບ ແລະ ໃຫ້ທິດຊີ້ນຳຕາມທາງຄວນດ້ວຍ.

**ປະທານກຳມາທິການ**

**(ເຊັນ ແລະ ປະທັບຕາ)**

**ໂຄງຮ່າງບົດລາຍງານສຳລັບກະຊວງ, ອົງການ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ/ອົງການ...................... ເລກທີ........./..........

ນະຄອນຫຼວງວຽງຈັນ, ວັນທີ..........................

(ຮ່າງ)

**ບົດລາຍງານ**

**ຮຽນ: ທ່ານ..................................................ທີ່ນັບຖື**

**ເລື່ອງ: ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ .........**

– ອີງຕາມມາດຕາ 124 ແລະ 125 ຂອງກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;

– ອີງຕາມກົດໝາຍວ່າດ້ວຍ.................................................;

– ອີງຕາມ............................................................

## I. ສະພາບລວມ

**1. ຄວາມເປັນມາຂອງກົດໝາຍວ່າດ້ວຍ........................................**

**.......................................................................................**

**1.1. ກົດໝາຍສະບັບທຳອິດ**

(ປະກາດໃຊ້ໃນປີໃດ, ມີຈັກພາກ, ໝວດ, ມາດຕາ, ສັງລວມສະພາບການຈັດຕັ້ງປະຕິບັດ ໂດຍສັງເຂບ)

**1.2. ການປັບປຸງກົດໝາຍໃນແຕ່ລະຄັ້ງ**

(ປັບປຸງຈັກຄັ້ງ; ແຕ່ລະສະບັບປະກາດໃຊ້ໃນປີໃດ, ມີຈັກພາກ, ໝວດ, ມາດຕາ; ເຫດຜົນ ແລະ ຄວາມຈຳເປັນທີ່ຕ້ອງປັບປຸງໃນແຕ່ລະຄັ້ງ ພ້ອມທັງສັງລວມສະພາບການຈັດຕັ້ງປະຕິບັດກົດໝາຍແຕ່ລະສະບັບ ທີ່ໄດ້ປັບປຸງ ໂດຍສັງເຂບ)

**1.3. ກົດໝາຍສະບັບນຳໃຊ້ປັດຈຸບັນ**

(ປະກາດໃຊ້ໃນປີໃດ, ມີຈັກພາກ, ໝວດ, ມາດຕາ)

**2. ການໂຄສະນາ ເຜີຍແຜ່ ກົດໝາຍ**

(ໃຫ້ສັງລວມລະອຽດ ໄດ້ໂຄສະນາ ເຜີຍແຜ່ ຈັກຄັ້ງ, ຈັກຈຸດ, ມີຜູ້ເຂົ້າຮ່ວມຈັກຄົນ ແລະ ຕີລາຄາສະພາບຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ກົດໝາຍສະບັບດັ່ງກ່າວ ຂອງຂະແໜງການ, ທ້ອງຖິ່ນ ແລະ ປະຊາຊົນ ມີຫຼາຍໜ້ອຍພຽງໃດ)

**3. ການຜັນຂະຫຍາຍເປັນນິຕິກຳໃຕ້ກົດໝາຍ**

**3.1. ຈຳນວນນິຕິກຳໃຕ້ກົດໝາຍ**

(ມີຈັກສະບັບ, ຊື່ຂອງນິຕິກຳໃຕ້ກົດໝາຍແຕ່ລະສະບັບ)

**3.2. ມາດຕາທີ່ກຳນົດໃຫ້ຜັນຂະຫຍາຍອອກເປັນນິຕິກຳໃຕ້ກົດໝາຍ**

(ມີຈັກມາດຕາ, ມາດຕາໃດແດ່)

**3.3. ມາດຕາທີ່ຜັນຂະຫຍາຍສຳເລັດ**

(ມີຈັກມາດຕາ, ມາດຕາໃດແດ່, ຊື່ຂອງນິຕິກຳໃຕ້ກົດໝາຍທີ່ຜັນຂະຫຍາຍມາຈາກມາດຕາດັ່ງກ່າວ)

**3.4. ມາດຕາທີ່ຍັງບໍ່ທັນໄດ້ຜັນຂະຫຍາຍ**

(ມີຈັກມາດຕາ, ມາດຕາໃດແດ່, ເຫດຜົນທີ່ບໍ່ຍັງບໍ່ທັນໄດ້ຜັນຂະຫຍາຍ)

**II. ຕີລາຄາການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ..............................**

**1. ຂໍ້ສະດວກ, ຂໍ້ຫຍຸ້ງຍາກ**

..............................................................................................

..............................................................................................

.......................................................................................

**2. ດ້ານດີ, ດ້ານອ່ອນ**

..............................................................................................

..............................................................................................

.......................................................................................

**3. ສາເຫດທີ່ພາໃຫ້ມີດ້ານດີ, ດ້ານອ່ອນ**

**3.1. ສາເຫດທີ່ພາໃຫ້ມີດ້ານດີ**

..............................................................................................

..............................................................................................

.......................................................................................

**3.2. ສາເຫດທີ່ພາໃຫ້ມີດ້ານອ່ອນ**

..............................................................................................

..............................................................................................

.......................................................................................

**4. ບັນຫາທີ່ຕັ້ງຂຶ້ນ**

– ບັນຫາທີ່ເຫັນວ່າ ພາກ, ໝວດ, ມາດຕາ ທີ່ບໍ່ສອດຄ່ອງ ຫຼື ມີບັນຫາໃນການຈັດຕັ້ງປະຕິບັດ.

– ບັນຫາທີ່ບໍ່ທັນໄດ້ກຳນົດໃສ່ໃນກົດໝາຍສະບັບປັດຈຸບັນ ແຕ່ຜ່ານການຈັດຕັ້ງປະຕິບັດ ເຫັນວ່າ ຄວນກຳນົດໃສ່.

**5. ບົດຮຽນທີ່ຖອດຖອນໄດ້**

..............................................................................................

**III. ທິດທາງ ແລະ ວິທີແກ້ໄຂ ໃນຕໍ່ໜ້າ**

..............................................................................................

**IV. ຂໍ້ສະເໜີ**

**1. ຂໍ້ສະເໜີ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ**

..............................................................................................

**2. ຂໍ້ສະເໜີ ກ່ຽວກັບການປັບປຸງກົດໝາຍ**

..............................................................................................

..............................................................................................

.................................................... (ຄວນປັບປຸງພາກໃດ, ໝວດໃດ, ມາດຕາໃດ ພ້ອມທັງຂຽນເນື້ອໃນທີ່ຕ້ອງການສະເໜີໃຫ້ປັບປຸງ ຢ່າງລະອຽດ)

ດັ່ງນັ້ນ, ຈຶ່ງລາຍງານມາຍັງທ່ານ ເພື່ອຊາບ.

**ລັດຖະມົນຕີ/ຫົວໜ້າອົງການ**

**(ເຊັນ ແລະ ປະທັບຕາ)**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**(ຮ່າງ)**

**ບົດປະກອບຄໍາເຫັນ**

**ຂອງຄະນະປະຈໍາສະພາແຫ່ງຊາດ ຕໍ່ບົດລາຍງານຂອງ ........................**

**ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ.....................**

**ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ ......... ຂອງສະພາແຫ່ງຊາດ ຊຸດທີ .......**

**ຮຽນ: - ......................................... ປະທານກອງປະຊຸມ ທີ່ເຄົາລົບ ແລະ ນັບຖືຢ່າງສູງ !**

**- ບັນດາທ່ານຄະນະປະທານກອງປະຊຸມ, ທ່ານ.............. ທີ່ເຄົາລົບນັບຖື !**

**- ບັນດາທ່ານສະມາຊິກສະພາແຫ່ງຊາດ ທີ່ນັບຖື !**

**- ບັນດາທ່ານແຂກທີ່ມີກຽດ ທີ່ນັບຖື ແລະ ຮັກແພງ !**

ຂ້າພະເຈົ້າ ມີຄວາມພາກພູມໃຈ ແລະ ເປັນກຽດຢ່າງຍິ່ງ ທີ່ໄດ້ຮັບມອບໝາຍຈາກ ທ່ານປະທານກອງປະຊຸມສະພາແຫ່ງຊາດ ໃຫ້ຕາງໜ້າຄະນະປະຈໍາສະພາແຫ່ງຊາດ ປະກອບຄໍາເຫັນຕໍ່ບົດລາຍງານຂອງ ........... ..... ກ່ຽວກັບການປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ...............

ສະບັບ ທີ່ສະເໜີໂດຍ ທ່ານ ............................ ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ ........... ຂອງສະພາແຫ່ງຊາດ ຊຸດທີ ....... ຄັ້ງນີ້.

ຜ່ານການຮັບຟັງການລາຍງານຂອງ ທ່ານ ................... ຄະນະປະຈຳສະພາແຫ່ງຊາດ ຕີລາຄາສູງຕໍ່.................. ທີ່ໄດ້ເປັນເຈົ້າການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ......................ໃນຄັ້ງນີ້. ພ້ອມກັນນີ້, ຄະນະປະຈຳສະພາແຫ່ງຊາດ ສະແດງຄວາມຊົມເຊີຍ ຕໍ່ ..................

ຄະນະປະຈຳສະພາແຫ່ງຊາດ ເຫັນດີໂດຍພື້ນຖານ ແລະ ເປັນເອກະພາບສູງ ຕໍ່ເນື້ອໃນບົດລາຍງານຂອງ .............................. ກ່ຽວກັບຜົນການປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ .............. ແຕ່ຜ່ານການຕິດຕາມກວດກາ, ເກັບກຳຂໍ້ມູນ ແລະ ລາຍງານຂອງ..................... ຄະນະປະຈຳສະພາແຫ່ງຊາດ ຂໍອະນຸຍາດມີບາງຄຳເຫັນ ຕໍ່ບົດລາຍງານຂອງ .............. ດັ່ງນີ້:

## I. ຕໍ່ກັບການຕີລາຄາດ້ານດີ:

..............................................................................................................................................................................................................................................

## II. ຕໍ່ກັບການຕີລາຄາດ້ານອ່ອນຄົງຄ້າງ:

..............................................................................................................................................................................................................................................

## III. ຕໍ່ກັບທິດທາງ ແລະ ມາດຕະການແກ້ໄຂ

..............................................................................................................................

**ຮຽນ: ຄະນະປະທານ, ທ່ານສະມາຊິກສະພາແຫ່ງຊາດ ທີ່ເຄົາລົບ ແລະ ນັບຖື !**

ການປະກອບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານຂອງ ........... ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ......................... ອາດຈະມີເນື້ອໃນບໍ່ທັນຄົບຖ້ວນ, ຈຶ່ງຮຽນສະເໜີ ບັນດາທ່ານສະມາຊິກສະພາແຫ່ງຊາດ ພິຈາລະນາ ແລະ ມີຄຳເຫັນຕື່ມ.

ອີກເທື່ອໜຶ່ງ, ຄະນະປະຈຳສະພາແຫ່ງຊາດ ສະແດງຄວາມຊົມເຊີຍ ຕໍ່ .............. ກ່ຽວກັບການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ .......... ຊຶ່ງໄດ້ຮັບຜົນສຳເລັດ ຕາມລະດັບຄາດໝາຍທີ່ວາງໄວ້.

ໃນທ້າຍນີ້, ຂໍອວຍພອນແດ່ ທ່ານປະທານ ແລະ ຄະນະປະທານກອງປະຊຸມ, ທ່ານ .......... ພ້ອມດ້ວຍທ່ານສະມາຊິກສະພາແຫ່ງຊາດ ແລະ ແຂກຜູ້ມີກຽດທຸກທ່ານ ຈົ່ງມີສຸຂະພາບເຂັ້ມແຂງ, ປະສົບຜົນສຳເລັດ ໃນໜ້າທີ່ອັນມີກຽດຂອງຕົນ.

**ຂໍຂອບໃຈ**

ໂຄງຮ່າງມະຕິກອງປະຊຸມສະພາແຫ່ງຊາດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ............../ສພຊ

ນະຄອນຫຼວງວຽງຈັນ, ວັນທີ.......................

(ຮ່າງ)

**ມະຕິ**

**ກອງປະຊຸມສະພາແຫ່ງຊາດ**

**ວ່າດ້ວຍການຮັບຮອງເອົາບົດລາຍງານຂອງ.................................**

**ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ..............**

– ອີງຕາມລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 5;

– ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປີ 2015 ເລກທີ 10/ສພຊ, ລົງວັນທີ 14 ພະຈິກ 2016 ມາດຕາ 13 ຂໍ້ 1;

– ອີງຕາມກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021 ມາດຕາ 125 ວັກທີໜຶ່ງ;

– ອີງຕາມບົດລາຍງານຂອງ ...................................... ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ................. ລົງວັນທີ

.......................... ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ ....... ຂອງສະພາແຫ່ງຊາດ ຊຸດທີ.........

ຜ່ານການພິຈາລະນາ ຢ່າງເລິກເຊິ່ງ ຕໍ່ເນື້ອໃນບົດລາຍງານຂອງ ........ ............................ ກ່ຽວກັບຜົນການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ.............. ໃນວາລະກອງປະຊຸມສະໄໝສາມັນ ເທື່ອທີ......... ຂອງສະພາແຫ່ງຊາດ ຊຸດທີ ............ ຄັ້ງວັນທີ .........................

**ກອງປະຊຸມ ຕົກລົງ:**

**ມາດຕາ 1 ຮັບຮອງເອົາ ບົດລາຍງານຂອງ.................................... ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ..............**

..........................................................................

...................................................................................

...................................................................................

...................................................................................

...........................................................................

**ມາດຕາ 2 ຮັບຮອງເອົາທິດທາງ, ມາດຕະການແກ້ໄຂ**

ກອງປະຊຸມ ເຫັນດີຮັບຮອງເອົາບັນດາທິດທາງ ແລະ ມາດຕະການແກ້ໄຂ ທີ່ .......................... ໄດ້ສະເໜີຕໍ່ກອງປະຊຸມຄັ້ງນີ້. ກອງປະຊຸມສະເໜີໃຫ້ .......................................................... ເອົາໃຈໃສ່ຈັດຕັ້ງປະຕິບັດທິດທາງ, ມາດຕະການລວມ ແລະ ສະເພາະເພີ່ມເຕີມ ດັ່ງນີ້:

**1. ທິດທາງ, ມາດຕະການລວມ:**

1) ..............................................................................

...............................................................................;

2) ..............................................................................

...............................................................................;

3) ..............................................................................

...............................................................................;

4) ..............................................................................

...............................................................................

**2. ທິດທາງ, ມາດຕະການສະເພາະ:**

1) ..............................................................................

...............................................................................;

2) ..............................................................................

...............................................................................;

3) ..............................................................................

...............................................................................;

4) ..............................................................................

...............................................................................

**ມາດຕາ 3 ການຈັດຕັ້ງປະຕິບັດ**

1. ມອບໃຫ້ .................................. ຊີ້ນໍາ ........................ .................................. ເພີ່ມທະວີຄວາມຮັບຜິດຊອບຂອງຕົນ ໃນການປະຕິບັດມະຕິສະບັບນີ້ ໃຫ້ເຂັ້ມງວດ ແລະ ເປັນຮູບປະທໍາ;

2. ມອບໃຫ້ຄະນະປະຈຳສະພາແຫ່ງຊາດ ຊີ້ນຳບັນດາກຳມາທິການ, ຄະນະເລຂາທິການ, ສະຖາບັນຄົ້ນຄວ້ານິຕິກຳ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພີ່ມທະວີການຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**(ເຊັນ ແລະ ປະທັບຕາ)**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ

ຄະນະປະຈຳ ເລກທີ 53 /ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 23 / 08 / 22

# ມະຕິ
## ຂອງຄະນະປະຈຳສະພາແຫ່ງຊາດ
## ວ່າດ້ວຍ ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ

– ອີງຕາມລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 5;

– ອີງຕາມກົດໝາຍວ່າດ້ວຍການຕິດຕາມກວດກາຂອງ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 12/ສພຊ, ລົງວັນທີ 15 ພະຈິກ 2016 ມາດຕາ 13;

– ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງ ກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 33 ຂໍ້ 3.1;

– ອີງຕາມກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021 ມາດຕາ 124 ແລະ 125.

ເພື່ອຮັບປະກັນໃຫ້ວຽກງານຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ມີຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດ.

**ຄະນະປະຈຳສະພາແຫ່ງຊາດ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ມະຕິສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ເນື້ອໃນ, ຮູບການ ແລະ ຂັ້ນຕອນ ກ່ຽວກັບວຽກງານຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂອງອົງການລັດ ເພື່ອເຮັດໃຫ້ວຽກງານດັ່ງກ່າວດຳເນີນຢ່າງເປັນລະບົບຕໍ່ເນື່ອງ, ມີປະສິດທິພາບ, ປະສິດທິຜົນ ແນໃສ່ເຮັດໃຫ້ກົດໝາຍທີ່ປະກາດໃຊ້ແລ້ວ ໄດ້ຮັບການຕິດຕາມກວດກາ ແລະ ປະເມີນຜົນ ຢ່າງຖືກຕ້ອງ ແລະ ເຂັ້ມງວດ.

**ມາດຕາ 2 ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ**

ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ແມ່ນ ການຕິດຕາມກວດກາ ວຽກງານການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂອງອົງການລັດ.

**ມາດຕາ 3 ຫຼັກການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ**

ໃນການເຄື່ອນໄຫວວຽກງານຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ;
2. ຮັບປະກັນຄວາມໂປ່ງໃສ, ຍຸຕິທຳ, ເປີດເຜີຍ;
3. ປະສານສົມທົບກັບອົງການລັດ ທີ່ມີໜ້າທີ່ປະເມີນຜົນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;
4. ມີຄວາມຊັດເຈນ ແລະ ທັນເວລາ;
5. ມີສ່ວນຮ່ວມຂອງປະຊາຊົນ ແລະ ສື່ມວນຊົນ.

## ໝວດທີ 2
## ຄວາມຮັບຜິດຊອບໃນການຕິດຕາມກວດກາ ການປະເມີນຜົນ ການຈັດຕັ້ງປະຕິບັດກົດໝາຍ

**ມາດຕາ 4 ຄວາມຮັບຜິດຊອບໃນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ**

ຄະນະປະຈຳສະພາແຫ່ງຊາດ ຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໂດຍມອບໃຫ້ກຳມາທິການກົດໝາຍ ເປັນໃຈກາງປະສານສົມທົບກັບບັນດາກຳມາທິການຂອງສະພາແຫ່ງຊາດ.

**ມາດຕາ 5 ຄວາມຮັບຜິດຊອບຂອງກຳມາທິການກົດໝາຍ**

ໃນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ກຳມາທິການກົດໝາຍ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າ, ສ້າງແຜນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ປະຈໍາປີ ຫຼື ເປັນແຕ່ລະໄລຍະ ເພື່ອສະເໜີຄະນະປະຈໍາສະພາແຫ່ງຊາດ ພິຈາລະນາ;

2. ເປັນໃຈກາງປະສານສົມທົບກັບກໍາມາທິການຂອງສະພາແຫ່ງຊາດ ກ່ຽວກັບວຽກງານຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ແລະ ຕິດຕາມກວດກາ, ຊຸກຍູ້ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃນຂົງເຂດທີ່ຕົນຮັບຜິດຊອບ;

3. ເຂົ້າຮ່ວມໃນການຕິດຕາມກວດກາ, ຊຸກຍູ້ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂອງຂະແໜງການ ໃນຂົງເຂດທີ່ກໍາມາທິການອື່ນ ຂອງສະພາແຫ່ງຊາດ ຮັບຜິດຊອບ;

4. ສະຫຼຸບ, ສັງລວມ ວຽກງານຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ເພື່ອລາຍງານຕໍ່ຄະນະປະຈໍາສະພາແຫ່ງຊາດ.

**ມາດຕາ 6 ຄວາມຮັບຜິດຊອບຂອງກໍາມາທິການອື່ນຂອງສະພາແຫ່ງຊາດ**

ໃນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ກໍາມາທິການອື່ນຂອງສະພາແຫ່ງຊາດ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າ, ປະກອບຄໍາເຫັນໃສ່ແຜນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ປະຈໍາປີ ຫຼື ເປັນແຕ່ລະໄລຍະ;

2. ຕິດຕາມກວດກາ, ຊຸກຍູ້ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃນຂົງເຂດທີ່ຕົນຮັບຜິດຊອບ;

3. ສະຫຼຸບ, ສັງລວມ ວຽກງານຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂອງຂະແໜງການ ໃນຂົງເຂດທີ່ຕົນຮັບຜິດຊອບ ໂດຍສົມທົບກັບກໍາມາທິການກົດໝາຍ.

## ໝວດທີ 3
## ເນື້ອໃນ, ຂັ້ນຕອນ, ຮູບການ ແລະ ຜົນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ

### ມາດຕາ 7 ເນື້ອໃນຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ

ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການໂຄສະນາ ເຜີຍແຜ່ ແລະ ຍົກສູງສະຕິເຄົາລົບກົດໝາຍ;
2. ການສ້າງ ຫຼື ກົນໄກການຈັດຕັ້ງປະຕິບັດກົດໝາຍ ລວມທັງການຜັນຂະຫຍາຍເປັນນິຕິກຳໃຕ້ກົດໝາຍ ເປັນອັນລະອຽດ;
3. ການກວດກາກົດໝາຍໃນບາງມາດຕາ ທີ່ມີບາງເນື້ອໃນຂັດກັນ, ເປັນຊ່ອງວ່າງ, ມີຜົນກະທົບ ຫຼື ສາເຫດທີ່ພາໃຫ້ບໍ່ສາມາດຈັດຕັ້ງປະຕິບັດໄດ້.

### ມາດຕາ 8 ຂັ້ນຕອນຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ

ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ສ້າງແຜນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ;
2. ດຳເນີນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ;
3. ລາຍງານ ແລະ ພິຈາລະນາ ຜົນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ.

**ມາດຕາ 9 ຮູບການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ**

ການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃຫ້ປະຕິບັດຕາມຮູບການ ດັ່ງນີ້:

1. ຮູບການເກັບກຳຂໍ້ມູນຕົວຈິງ;
2. ຮູບການເກັບກຳຂໍ້ມູນດ້ວຍການສອບຖາມເປົ້າໝາຍ;
3. ຮູບການຈັດກອງປະຊຸມ.

ລາຍລະອຽດຂອງຂັ້ນຕອນ ແລະ ຮູບການ ໄດ້ກຳນົດໄວ້ໃນຄູ່ມືການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ.

**ມາດຕາ 10 ຜົນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ**

ພາຍຫຼັງກອງປະຊຸມສະພາແຫ່ງຊາດ ພິຈາລະນາ, ຮັບຮອງເອົາຜົນການຕິດຕາມກວດກາ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍແລ້ວ ໃຫ້ອົງການລັດທີ່ກ່ຽວຂ້ອງ ນຳໄປປັບປຸງແກ້ໄຂ ຕາມມະຕິກອງປະຊຸມສະພາແຫ່ງຊາດ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 11 ການຈັດຕັ້ງປະຕິບັດ**

ກຳມາທິການຂອງສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ຄະນະປະຈຳສະພາແຫ່ງຊາດ**

**ປະທານ**

ປອ ໄຊສົມພອນ ພົມວິຫານ

(ສະຫງວນລິຂະສິດ)

2022